ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********◇********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ຫ້ອງການ

ເລກທີ 3 2 2/ຄຊກລ.ຄສ

ນະຄອນຫຼວງວຽງຈັນ, ວັນທີ: 27 JUN 2..

## ບົດລາຍງານ

ກອງປະຊຸມປະຈຳປີ ແລະ ທົບທວນກ່ຽວກັບການຈັດລາຍການວິທະຍຸໂຄສະນາພິບຮ້າຍຂອງ ລບຕ
ທີ່ ແຂວງສາລາວັນ, ວັນທີ 4-8/6/2018.

- ອີງຕາມ ແຜນປະຕິບັດງານ ປະຈຳປີ 2018 ຂອງໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ.
- ອີງຕາມ ການຕົກລົງເຫັນດີຂອງຫົວໜ້າຫ້ອງການ ຄຊກລ, ສະບັບເລກທີ 154/ຄຊກລ.ຫກ, ລົງວັນທີ 18 ພຶດສະພາ 2018.

ກອງປະຊຸມປະຈຳປີ ແລະ ທົບທວນກ່ຽວກັບ ການຈັດລາຍການວິທະຍຸໂຄສະນາພິບຮ້າຍຂອງ ລບຕ ໄດ້ຈັດຂຶ້ນທີ່ແຂວງສາລາວັນ ພາຍໃຕ້ການເປັນປະທານຂອງທ່ານ ບຸນພະມິດ ໂສມວິຈິດ ຮອງຫົວໜ້າຫ້ອງການ ຄຊກລ ຜູ້ຊີ້ນຳວຽກປະຕິບັດງານ ແລະ ທ່ານ ບຸນຮາບ ສຸລີໂຍ ຮອງກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ, ເຊິ່ງມີຜູ້ເຂົ້າຮ່ວມຈາກ ຫ້ອງການ ຄຊກລ ສູນກາງ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງສາລາວັນ, ຫ້ອງການ ຄຊກລ ແຂວງສາລາວັນ, ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ, ວິທະຍຸແຫ່ງຊາດ, ວິທະຍຸແຂວງຄຳມ່ວນ, ວິທະຍຸແຂວງສາລາວັນ, ວິທະຍຸແຂວງເຊກອງ, ວິທະຍຸແຂວງຈຳປາສັກ.

ໃນການກ່າວເປີດກອງປະຊຸມ ທ່ານປະທານກອງປະຊຸມ ໄດ້ເນັ້ນໜັກວ່າ: ຈຸດປະສົງຂອງກອງປະຊຸມແມ່ນເພື່ອ: ເປັນການເບິ່ງຄືນໃນການປະຕິບັດວຽກງານໃນໄລຍະຜ່ານມາ ແລະ ຈະມີການປັບປຸງ ເສີມຕໍ່ແນວໃດ ເພື່ອໃຫ້ວຽກນີ້ມີປະສິດທິພາບປະສິດທິຜົນຫຼາຍຂຶ້ນ. ໂຄງການພວກເຮົາແມ່ນ ການໂຄສະນາພິບຮ້າຍຂອງ ລບຕ ໂດຍຜ່ານລາຍການວິທະຍຸຂອງຂັ້ນແຂວງ ເບື້ອງຕົ້ນມີ 4 ແຂວງ ແຕ່ຜ່ານການຈັດຕັ້ງປະຕິບັດ ແລະ ກອງປະຊຸມ ທົບທວນທີ່ແຂວງຈຳປາສັກ ເຫັນວ່າມີຄວາມຈຳເປັນ ສະນັ້ນ ພວກເຮົາຈຶ່ງໄດ້ເພີ່ມວິທະຍຸແຫ່ງຊາດ ຢູ່ທີ່ນະຄອນຫຼວງວຽງຈັນ ອີກໜຶ່ງແຂວງ ຍ້ອນວ່າວິທະຍຸມີຄວາມສຳຄັນຫຼາຍຕໍ່ການການໂຄສະນາ ແລະ ປູກຈິດສຳນຶກໃຫ້ກັບຊຸມຊົນ.

ໃນກອງປະຊຸມ ວິທະຍຸແຕ່ລະແຂວງໄດ້ນຳເອົາ ສຳເນົາການຈັດລາຍການໂຄສະນາພິບຮ້າຍຂອງ ລບຕ ທີ່ຕົນເອງໄດ້ອອກອາກາດມາສະເໜີຕໍ່ທີ່ປະຊຸມ ແລະ ຊ່ວຍກັນວິເຄາະ ເຊິ່ງສາມາດສັງລວມໄດ້ດັ່ງນີ້:

ຂໍ້ດີ:

- ມີການຜະລິດລາຍການສະເພາະ ແລະ ຕໍ່ເນື່ອງ.
- ມີການສຳພາດ ວິຊາການສະເພາະດ້ານ.

- ຫົວໜ້າພະແນກ ຖວທ ແຂວງ ກໍໄດ້ເອົາໃຈໃສ່ ແລະ ລະດົມແນວຄິດອ້າຍນ້ອງຢ່າງຕໍ່ເນື່ອງ ພວກເຮົາກໍ່ມີການຈັດລາຍການ ຢ່າງປົກກະຕິ.
- ເປັນການຮັບຂໍ້ມູນຂ່າວສານ ທີ່ມີຄ່າໃຊ້ໜ້ອຍ ສາມາດຮັບຟັງໄດ້ທຸກທີ່ທຸກເວລາ.
- ອີງໃສ່ສະພາບງົບປະມານ ບາງປີ ຄຊກລ ບໍ່ມີງົບປະມານສະໜັບສະໜູນ ແຕ່ພວກເຮົາກໍຍັງຄົງສືບຕໍ່ຕາມເງື່ອນໄຂຕົວຈິງ.
- ສໍາລັບແຂວງຄໍາມ່ວນ ຖືວ່າ ຄກລ ຂັ້ນແຂວງແມ່ນໄດ້ໃຫ້ການຮ່ວມມືເປັນຢ່າງດີ ລວມທັງຂໍ້ມູນ, ການລົງເກັບກໍາຂໍ້ມູນ.

ຄວນປັບປຸງ:

- ການຈັດລາຍການ ຄວນມີຈຸດເໜັ້ນໜັກ ຄວນໃຊ້ໜຶ່ງຫົວຂໍ້ ຕໍ່ໜຶ່ງຄັ້ງ ເພື່ອເປັນຈຸດເໜັ້ນ ແຕ່ການຈັດໃຫ້ເປັນຮອບວຽນ ຕັ້ງແຕ່ພາກ ປະຫວັດສາດ, ຊະນິດລະເບີດ, ຜົນຮ້າຍຂອງ ລບຕ, ການປ້ອງກັນບໍ່ໃຫ້ເກີດອຸປະຕິເຫດ, ການລາຍງານ (ລາຍງານຊະນິດ ລບຕ, ລາຍງານກອງທຶນຊ່ວຍເຫຼືອ, ລາຍງານເບີສາຍດ່ວນ ລບຕ)
- ຂໍ້ມູນກ່ຽວກັບເບີໂທສາຍດ່ວນ ລບຕ 1603 ແມ່ນໄດ້ແຈກໃຫ້ບັນດາແຂວງໃນຮູບແບບໂປສເຕີ ແຕ່ຍັງບໍ່ປະກົດເຫັນໃສ່ໃນການຈັດລາຍການໂຄສະນາຜົນຮ້າຍຂອງ ລບຕ ຜ່ານທາງລາຍການວິທະຍຸ.
- ລະບົບການລາຍງານ ແມ່ນໄດ້ເອກະພາບກັນໃນກອງປະຊຸມຄັ້ງຜ່ານມາທີ່ແຂວງຈໍາປາສັກ ແຕ່ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ບໍ່ສາມາດປະຕິບັດ ລວມທັງບົດລາຍງານກິດຈະກໍາ ແລະ ເອກະສານກ່ຽວກັບການໂອນເງິນ ມີຄວາມຊັກຊ້າຫຼາຍ ເປັນເຫດໃຫ້ບໍ່ທັນກັບສະພາບຕົວຈິງ ບາງຄັ້ງກໍ່ກະທົບຕໍ່ການລະດົມທຶນ.
- ການໂຄສະນາກ່ຽວກັບ ການດັງໄຟ ຄວນເໜັ້ນໃສ່: ການດັງໄຟທີ່ປອດໄພຈາກ ລບຕ ຄວນດັງໃສ່ພະລານຫີນ, ພູນດິນຂຶ້ນໃຫ້ສູງ ບໍ່ໃຫ້ເວົ້າວ່າດັງໃສ່ບ່ອນເກົ່າ ເພາະມີອຸປະເຫດຈາກການດັງໄຟໃສ່ບ່ອນເກົ່າ.
- ຂໍ້ມູນທີ່ພວກເຮົາໂຄສະນາ ສ່ວນຫຼາຍເປັນຂໍ້ມູນຕາຍ ສະນັ້ນ ຄວນມີການປະສານງານ ກັບບັນດາພາກສ່ວນຕ່າງໆພາຍໃນແຂວງ ເພື່ອເກັບກໍາຂໍ້ມູນມາປ້ອນໃນລາຍການ ເພາະເປັນຂໍ້ມູນໃກ້ຕົວ ຖ້າສົ່ງໄປແຕ່ສູນກາງບາງຢ່າງກໍ່ດີ ແຕ່ເປັນຂໍ້ມູນໄກຕົວຜູ້ຟັງ ອາດຈະບໍ່ສ້າງຄວາມສົນໃຈເທົ່າທີ່ຄວນ.
- ເລື່ອງການສໍາພາດວິຊາການທີ່ກ່ຽວຂ້ອງ ຄວນມີການປະສານງານທີ່ລະອຽດ ລະຫວ່າງສະຖານີ ກັບບັນດາພາກສ່ວນກ່ຽວຂ້ອງ ເພາະບາງຄັ້ງວິຊາການກໍ່ບໍ່ເຂົ້າໃຈ ແລະ ມີຄວາມລະວັງໃນການອອກສື່ ເຊິ່ງມີບົດຮຽນມາຈາກໂທລະໂຄ້ງອອກຂ່າວຜິດພາດ: ການຕາຍຂອງ ຊ່ຽວຊານທໍາລາຍລະເບີດຂັ້ນແຂວງ ທີ່ແຂວງຊຽງຂວາງ ແຕ່ຄວາມເປັນຈິງຂ່າວນີ້ບໍ່ມີຄວາມຈິງ ລາວບໍ່ໄດ້ຕາຍ.
- ປະຈຸບັນ ບັນດາສະຖານີ ມີງົບປະມານຈໍາກັດໃນການລົງເກັບກໍາຂໍ້ມູນ ລວມໄປເຖິງພາຫານະໃນການເດີນທາງ.
- ຄວນມີການຈັດກອງປະຊຸມແລກປ່ຽນກັນຫຼາຍຂຶ້ນລະຫວ່າງ ກົມສື່ມວນຊົນ ແລະ ຫ້ອງການ ຄຊກລ ເພື່ອຊອກຫາຊ່ອງທາງໃນການລະດົມທຶນ.

ນອກຈາກນີ້ ກອງປະຊຸມ ໄດ້ສົນທະນາ ແລະ ປຶກສາຫາລືກັນ ດັ່ງນີ້:

- ສະເໜີໃຫ້ແຕ່ລະພາກສ່ວນເອົາໃຈໃສ່ໃນການປະສານງານ, ການສົ່ງເອກະສານທາງດ້ານການເງິນໃຫ້ລະອຽດຕື່ມ ແລະ ທັນກັບເວລາ.
- ກຸ່ມແອັບ ແມ່ນໃຫ້ແຕ່ລະແຂວງແຕ່ງຕັ້ງໃຜເປັນຜູ້ລາຍງານ, ສົ່ງບົດລາຍງານ, ສາມາດສົ່ງສິ່ງທ້າທາຍຕ່າງໆ.
- ບົດລາຍງານ ສະເໜີໃຫ້ມີການຮ່າງ ແລະ ສົ່ງ ທີ່ເຮົາຢາກໄດ້ໃນການລາຍງານ ທີ່ກະທັດຮັດ ແລະ ຊັດເຈນ ສິ່ງໃຫ້ບັນດາແຂວງ ໃນການລາຍງານຕ້ອງໄດ້ລະບຸ ຜູ້ຟັງສົນໃຈຫຍັງ, ມີຈັກສາຍໂທເຂົ້າມາ, ຈໍານວນຜູ້ຟັງໃນແຕ່ລະເດືອນ.
- ຂໍ້ມູນໃຫ້ມີການປະສານງານ ກັນຫຼາຍຂຶ້ນ ເພື່ອສະໜອງຂໍ້ມູນໃຫ້ກັນ ແລະ ກັນ, ໃຫ້ຂໍ້ມູນຈອດກັນ ເພື່ອຄວາມອຸດົມສົມບູນ ຂອງລາຍການ.

- ວິທະຍຸແຫ່ງຊາດ ພວກເຮົາກໍ່ຈະພະຍາຍາມໃນການຜະລິດລາຍການໃຫ້ດີຂຶ້ນ, ການເປີດສະປ໊ອດ ເປັນການບຸກລະດົມປະຊາຊົນ ການເປີດສະປ໊ອດຈຳນວນໜຶ່ງເປັນການປະກອບສ່ວນ ແຕ່ທັງນີ້ທັງນັ້ນ ສິ່ງເລົ່ານີ້ມີຄວາມກ່ຽວພັນ ກັບຄະນະນຳພະແນກ ສະນັ້ນ ກອງປະຊຸມຄັ້ງຕໍ່ໄປ ຄວນມີຄະນະນຳພະແນກເຂົ້າຮ່ວມ, ແຮງງານແຂວງ, ຄຊກລ ແຂວງ.
- ການຈັດລາຍການ ຄວນມີການແລກປ່ຽນ ຟັງເບິ່ງຂອງຕົນເອງຈັດ ແລະ ຜູ້ອື່ນຈັດ ເພື່ອເປັນການຖອດຖອນບົດຮຽນ.
- ຕໍ່ການເປີດສະປ໊ອດ ເຂົ້າໃຈລະບົບຂອງແຕ່ລະພະແນກ ຖ້າເຮົາຈັດຟັງລາຍການແລ້ວກໍ່ຕາມນັ້ນ ຖ້າມີການປ່ຽນແປງຕ້ອງແມ່ນປີຕໍ່ໄປ ເລື່ອງການຂະຫຍາຍລາຍການ ໃຫ້ ຄຊກລ ພິຈາລະນາຕື່ມ ເລື່ອງການເປີດສະປ໊ອດ ກົມພວກເຮົາຊ່ວຍໃນການໂຄສະນາ, ຖອທ ກໍ່ຕ້ອງໄດ້ມີການປະກອບສ່ວນ ຕາມຄຳສັ່ງຂອງທ່ານນາຍົກ.
- ການລາຍງານການເງິນແມ່ນ ວັນທີ 25 ຂອງເດືອນທີ່ສອງຂອງໄຕມາດ ສົ່ງໃຫ້ ຄຊກລ ເພື່ອຄວາມສະດວກໃນການຈ່າຍງົບປະມານ.
- ການລາຍງານກິດຈະກຳ ແມ່ນວັນທີ 25 ຂອງເດືອນ ຕ້ອງໄດ້ລາຍງານທຸກໆເດືອນ ສົ່ງໃຫ້ ຄຊກລ ແລະ ຖອທ.

ໃນຕອນທ້າຍຂອງກອງປະຊຸມ ຄະນະປະທານກອງປະຊຸມກໍ່ໄດ້ເນັ້ນໜັກ ເພີ່ມເຕີມວ່າ:

- ການແບ່ງຄວາມຮັບຜິດຊອບ ທາງເບື້ອງ ຄຊກລ ຈະລົງເລິກເລື່ອງການລະດົມທຶນ ເນື້ອໃນທີ່ກ່ຽວກັບກັບ ລບຕ ເທົ່ານັ້ນ ແຕ່ຮູບແບບຕ່າງໆທີ່ກ່ຽວກັບການຈັດລາຍການ ແມ່ນມອບໃຫ້ ຖອທ ບັນດາແຂວງທັງໝົດ ຄຊກລ ຈະບໍ່ແຊກແຊງສ່ວນເລື່ອງອຸປະກອນ ພວກເຮົາຈະພະຍາຍາມລະດົມທຶນ ບໍ່ວ່າຈະເປັນ ຖົງຟາຍ, ວິທະຍຸ, ໝວກ, ຄອມພິວເຕີ, ຮາດດິດ, ປິ້ນເຕີ, ກ້ອງຖ່າຍຮູບ ຕາມຄວາມສາມາດທີ່ມີ.
- ພວກເຮົາຈະພະຍາຍາມຊ່ວຍກັນໃນການປູກຈິດສຳນຶກ ໂຄສະນາພິນຮ້າຍຂອງ ລບຕ ເພື່ອໃຫ້ປະຊາຊົນມີ ຄວາມປອດໄພຈາກ ລບຕ, ສີສັງຄົມອອນລາຍ ບາງອັນກໍ່ດີ ແຕ່ຫຼາຍອັນກໍ່ເປັນພິນເສຍຫາຍ ພວກເຮົາກໍ່ໄດ້ຕັກເຕືອນ ນັກຂ່າວໃຫ້ມີຄວາມລະມັດລະວັງ, ມີຄວາມຮັບຜິດຊອບໃນການອອກຂ່າວ, ຄວນຕິດຕາມ ແລະ ແກ້ຂ່າວ (ຖ້າຜິດພາດ) ຕາມຄວາມເໝາະສົມຂອງສະພາບການ.

ດັ່ງນັ້ນ ຈຶ່ງໄດ້ສະເໜີ ມາຍັງທ່ານເພື່ອຮັບຊາບ

ຫົວໜ້າຫ້ອງການ

ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ

ບຸນພະມິດ ໂສມວິຈິດ

Mr.Bounphamith SOMVICHITH

ສີສະ ນວັນ